ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນາຖາວອນ

________000________

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ຫ້ອງການກະຊວງ

ເລກທີ 53 /ຫ.ກ.ຖ.ວ.

ວຽງຈັນ, ວັນທີ 25/ 3 / 2010

# ແຈ້ງການ

ເຖິງ: - ຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ, ນະຄອນຫລວງ

-ບັນດາຫົວໜ້າຫ້ອງການກະຊວງ, ທະບວງ, ອົງການຈັດຕັ້ງພັກ, ລັດຖະບານ ແລະ ມະຫາຊົນ ໃນ ສ.ປ.ປ.ລາວ.

ເລື່ອງ: ການຈັດຕັ້ງປະຕິບັດ ລະບຽບການຄຸ້ມຄອງ ການບໍລິການແປພາສາ ຢູ່ ສ.ປ.ປ.ລາວ.

- ເພື່ອເຮັດໃຫ້ການບໍລິການແປພາສາ ຢູ່ ສ.ປ.ລາວ ເຂົ້າສູ່ລະບຽບ, ກົດໝາຍ.

- ເພື່ອເຮັດໃຫ້ບຸກຄົນ ແລະ ນິຕິບຸກຄົນ ນັບທັງພາກລັດ ແລະ ເອກະຊົນ ທີ່ກຳລັງດຳເນີນທຸລະກິດການບໍລິການແປພາສາ ແລະ ຜູ້ທີ່ມີຄວາມປະສົງດຳເນີນທຸລະກິດການບໍລິການແປພາສາຢູ່ໃນ ສ.ປ.ປ.ລາວໄດ້ຮັບຮູ້ ແລະ ເຂົ້າໃຈລະບຽບການຄຸ້ມຄອງວຽກງານດັ່ງກ່າວນີ້ຢ່າງເລິກເຊິ່ງເຖິງຖອງ.

- ເພື່ອພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

ຫ້ອງການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ແຈ້ງການ ດັ່ງນີ້:

1. ໃຫ້ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ, ນະຄອນຫລວງວຽງຈັນ, ອອກປະກາດແຈ້ງການຂອງຕົນ ເຖິງບັນດາຫ້ອງການແຫລງຂ່າວ - ວັດທະນະທຳເມືອງ ແລະ ບໍລິສັດບໍລິການແປພາສາ ທີ່ຕົນໄດ້ອອກອະນຸຍາດຜ່ານມານັ້ນ ດຳເນີນການບໍລິການແປພາສາ ຕາມຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ວ່າດ້ວຍລະບຽບການຄຸ້ມຄອງ ການບໍລິການແປພາສາ ຢູ່ ສ.ປ.ປ. ລາວ ເລກທີ 65/ຖວ, ລົງວັນທີ 27/ 01/2010

ຢ່າງເຂັ້ມງວດ ພ້ອມທັງ ແຈກຢາຍຂໍ້ຕົກລົງສະບັບດັ່ງກ່າວໃຫ້ບັນດາຫ້ອງການຖະແຫລງຂ່າວ - ວັດທະນະທຳເມືອງ ແລະ ບັນດາບໍລິສັດບໍລິການແປພາສາ ຢ່າງທົ່ວເຖິງ.

2. ໃຫ້ບັນດາຫ້ອງການ ກະຊວງ, ທະບວງ, ອົງການຈັດຕັ້ງພັກ, ລັດຖະບານ ແລະ ມະຫາຊົນ ໃນ ສ.ປ. ປ.ລາວ ທີ່ເຄີຍໄດ້ດຳເນີນການບໍລິການແປພາສາ ໃນຮູບແບບຄະນະກຳມະການ ແລະ ອະນຸກຳມະການແປພາສາ ມາເປັນຮູບແບບ **ໜ່ວຍງານບໍລິການແປພາສາ** ຕາມທີ່ລະບຸໄວ້ໃນ ຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ວ່າດ້ວຍລະບຽບການຄຸ້ມຄອງ ການບໍລິການແປພາສາ ຢູ່ ສ.ປ.ປ. ລາວ ເລກທີ 65/ຖວ, ລົງວັນທີ 27/ 01/ 2010 ຢ່າງເຂັ້ມງວດ ແລະ ຈຶ່ງໄດ້ແຈກຢາຍ ຂໍ້ຕົກລົງສະບັບດັ່ງກ່າວ ໃຫ້ບັນດາໜ່ວຍງານ ບໍລິການແປພາສາ ທີ່ປະຈຳຢູ່ຂະແໜງການຕົນ ຢ່າງທົ່ວເຖິງ.

3. ໃຫ້ບຸກຄົນ ແລະ ນິຕິບຸກຄົນ ທັງພາກລັດ ແລະ ເອກະຊົນ ທີ່ມີຄວາມປະສົງດຳເນີນການບໍລິການແປພາສາ ຢູ່ ສ.ປ.ປລາວ ຈຶ່ງໄດ້ຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ວ່າດ້ວຍ ລະບຽບການຄຸ້ມຄອງການບໍລິການແປພາສາ ເລກທີ 65/ຖວ, ວັນທີ 27/ 01/ 2010 ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ອຶບທອງ ນະໂບທໍາ